**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ຫົວບົດສອບເສັງນັກຮຽນເກັ່ງ ຂັ້ນແຂວງ ຊັ້ນມັດທະຍົມສຶກສາຕອນຕົ້ນ (ມ.4)**
**ສົກຮຽນ: 2021 - 2022**
**ວິຊາ: ພາສາລາວ - ວັນນະຄະດີ , ເວລາ 120 ນາທີ**

I. ພາກທິດສະດີ.

1. ຈົ່ງໃຫ້ຄວາມໝາຍຂອງການໂຕ້ວາທີ?

.........................................................................................................

.........................................................................................................

.........................................................................................................

.........................................................................................................

........................................

2. ຈົ່ງສ້າງປະໂຫຍກ ທີ່ມີຄຳນາມ, ຄຳແທນນາມເຮັດໜ້າທີ່ເປັນຄຳຕົວຕັ້ງໃນປະໂຫຍກໃຫ້ໄດ້ຢ່າງລະ 2 ປະໂຫຍກ?

❖ ຄຳນາມເປັນຄຳຕົວຕັ້ງໃນປະໂຫຍກ:

- .....................................................................................

- ....................................................................................

❖ ຄຳແທນນາມເປັນຄຳຕົວຕັ້ງໃນປະໂຫຍກ:

- ......................................................................................

- .......................................................................................

3. ຈົ່ງອ່ານກອນລຸ່ມນີ້ແລ້ວເລືອກເອົາ: ນາມອະລີ, ຄຸນນາມອະລີ, ກຳມະອະລີ? ຢ່າງລະ 1 ອະລີ.

“ ລາວເຮົາມີມູນເຊື້ອ ອັນປະເສີດສັກສິດ
ພາໃຫ້ລາວມີລິດ ບໍ່ຕ່ຳຄົນຈົນແຕ້ມ
ແນມເບິ່ງຄາວຫຼັງພຸ້ນ ສະກຸນລາວລືເດດ
ສ້າງປະເທດໃຫຍ່ກ້ວາງ ເຫຼືອງເຫຼື້ອມຮຸ່ງເຮືອງ ”

❖ ນາມອະລີ: .......................................................................

❖ ຄຸນນາມອະລີ:......................................................................

❖ ກຳມະອະລີ:.................................................................

4. ຈົ່ງເລືອກຄຳສັບໃສ່ຕາຕະລາງໃຫ້ຖືກຕ້ອງ?
ນົກນ້ອຍ, ນົກໄສ່, ນົກເຄົ້າ, ນົກບິນ, ນົກກິນໝາກໄຮ,ນົກໃຫຍ່ຂົນລາຍ,ນົກເຄົ້າອັ່ນຄອນ, ນົກຍາງ ງອຍຂອນ, ນົກກະດ່ຽງຄໍຍາວ, ນົກສົມຕີພາບງາມ.

| ຄຳ | ອະລິ | ປະໂຫຍກ |
|---|---|---|
| | | |

5. ຈົ່ງຕີຄວາມໝາຍຂອງຄຳກອນລຸ່ມນີ້?
" ເກົ້າອົດເກົ້າເຍື້ອນ ຜ່ານຜ່າມໍລະສຸມ
ໄປໃຫ້ເຖິງຈຸດໝາຍ ເນັ່ງແນວວາງໄວ້
ຍາມໃດເຮົາພວມພົ້ນ ອິນທະການຜ່ານຜ່າ
ປານວ່າໄດ້ໝື່ນຕື້ ຄຳເຂັ້ມໃສ່ມື "

............................................................................................................

............................................................................................................

............................................................................................................

............................................................................................................

............................................................................................................

............................................................................................................

............................................................

II. ພາກແຕ່ງຕົວຈິງ.

1. ຈົ່ງອະທິບາຍ-ພິສູດ ຄຳເວົ້າທີ່ວ່າ : " ເພັດງາມຈະມີປະໂຫຍດໄດ້ກໍ່ຕໍ່ເມື່ອມີຜູ້ນຳມາໃຊ້ເປັນເຄື່ອງ ປະດັບ, ຖ້າຝັງໄວ້ໃນຕົມກໍ່ບໍ່ມີປະໂຫຍດອັນໃດ ຄົນທີ່ມີຄວາມຮູ້ ຖ້າບໍ່ເອົາອອກມາໃຊ້ ກໍບໍ່ຕ່າງ ຫຍັງກັບເພັດທີ່ຝັງໄວ້ໃນຕົມ "

**ຄະນະກຳມະການອອກຫົວບົດ**

**ຂະໜານຕອບ**

**ພາສາລາວ-ວັນນະຄະດີ ມ.4**

1. ການໂຕ້ວາທີແມ່ນການເວົ້າແກ້ກັນ ຫຼື ຕອບກັນເພື່ອເອົາຊະນະກັນດ້ວຍເຫດ ແລະ ຜົນໃນຫົວຂໍ້ໃດໜຶ່ງ ຫົວຂໍ້ທີ່ນຳມາໂຕ້ວາທີນັ້ນ ເອີ້ນວ່າ " ຍັດຕິ " ( 1 ຄະແນນ )
2. ສ້າງປະໂຫຍກທີ່ມີ: (1 ຄະແນນ )
   - ຄຳນາມເປັນຄຳຕົວຕັ້ງ 2 ປະໂຫຍກ :
     + ເອື້ອຍຂຽນໜັງສືງາມໆ
     + ທ້າວໂສມສີ ເສັງໄດ້ຄະແນນດີ
   - ຄຳແທນນາມເປັນຄຳຕົວຕັ້ງ 2 ປະໂຫຍກ:
     + ພວກເຮົາໄປອອກແຮງງານຖາງຫຍ້າ
     + ລາວເປັນຜູ້ເວົ້າໃຫ້ເຮົາຟັງ
3. ອ່ານກອນລຸ່ມນີ້ແລ້ວເລືອກເອົາ: ນາມອະລີ, ຄຸນນາມອະລີ, ກຳມະອະລີ ຢ່າງລະ1 ອະລີ ( 1 ຄະແນນ )
   - ນາມອະລີ: ປະເທດໃຫຍ່ກວ້າງ
   - ກຳມະອະລີ : ແນມເບິ່ງ
   - ຄຸນນາມອະລີ : ເຫຼືອງເຫຼື້ອມ
4. ຈົ່ງເລືອກເອົາຄຳໃສ່ຕາຕາລາງໃຫ້ຖືກຕ້ອງ: ນົກນ້ອຍ, ນົກໄສ່, ນົກເຄົ້າ, ນົກກິນໝາກໄຮ, ນົກໃຫຍ່ຂົນລາຍ, ນົກເຄົ້າອັ່ນຄອນ, ນົກຍາງງອຍຂອນ, ນົກກະດ່ຽງຄໍຍາວ, ນົກສັນຕິພາບງາມ. (1ຄະແນນ )

| ຄຳ | ອະລີ | ປະໂຫຍກ |
|---|---|---|
| ນົກນ້ອຍ | ນົກໃຫຍ່ຂົນລາຍ | ນົກບິນ |
| ນົກໄສ່ | ນົກເຄົ້າອັ່ນຄອນ | ນົກຍາງງອຍຂອນ |
| ນົກເຄົ້າ | ນົກກະດ່ຽງຄໍຍາວ | ນົກກິນໝາກໄຮ |
| | ນົກສັນຕິພາບງາມ | |

5. ຄວາມໝາຍຂອງຄຳກອນເວົ້າເຖິງຄວາມອົດທົນພະຍາຍາມບຸກບືນຜ່ານຜ່າອຸປະສັກນາໆປະການຈົນກ້າວໄປເຖິງການໄດ້ຮັບຜົນສຳເລັດອັນດີງາມ (1 ຄະແນນ )

**ພາກຫັດແຕ່ງ:**

ຈົ່ງ ອະທິບາຍ + ພິສູດ ຄຳເວົ້າທີ່ວ່າ

" ເພັດງາມຈະມີປະໂຫຍດໄດ້ ກໍຕໍ່ເມື່ອມີຜູ້ນຳມາໃຊ້ເປັນເຄື່ອງປະດັບ ຖ້າຝັງໄວ້ໃນດິນກໍບໍ່ມີປະໂຫຍດອັນໃດ, ຄົນທີ່ມີຄວາມຮູ້ຖ້າບໍ່ນຳອອກມາໃຊ້ກໍບໍ່ຕ່າງຫຍັງກັບເພັດທີ່ຝັງໄວ້ໃນດິນ "

1. **ຕັ້ງບັນຫາ ( 0,5 ຄະແນນ )**

ເວົ້າເຖິງຄຸນຄ່າຂອງເພັດ ແລະ ຄວາມຮູ້ຂອງຄົນເຮົາຈະມີຄ່າໄດ້ກໍຕໍ່ເມື່ອຖືກເອົາມານຳໃຊ້ໃຫ້ເກີດປະໂຫຍດ

2. **ແກ້ໄຂບັນຫາ ( 3 ຄະແນນ )**
   - ຄ່າຂອງເພັດຕໍ່ກັບຄວາມນິຍົມຂອງສັງຄົມເມື່ອຖືກນຳໃຊ້(ອະທິບາຍ)
   - ຄ່າຂອງເພັດເມື່ອບໍ່ໄດ້ນຳໃຊ້ຈະເປັນແນວໃດ? (ອະທິບາຍ)
   - ຄວາມຮູ້ຂອງຄົນເຮົາຖ້າຢາກໃຫ້ມີຄ່າ ກໍຕ້ອງນຳໃຊ້ຄວາມຮູ້ໃຫ້ເກີດປະໂຫຍດ( ອະທິບາຍ-ພິສູດ)
   - ຄົນທີ່ມີຄວາມຮູ້ເມື່ອບໍ່ເອົາອອກມາໃຊ້ມັນຈະບໍ່ມີປະໂຫຍດຫຍັງ? ຕໍ່ຕົນເອງ, ສັງຄົມ ແລະ ປະເທດຊາດ (ອະທິບາຍ- ພິສູດ)
3. **ສະຫຼຸບບັນຫາ ( 0,5 ຄະແນນ)**
   - ຄວາມສຳຄັນຂອງການນຳໃຊ້ຄວາມຮູ້ໃຫ້ເກີດປະໂຫຍດ

- ສະແດງທັດສະນະຂອງຕົນ

( ຂຽນງາມ, ສະອາດ, ຖືກຫຼັກໄວຍາກອນ 1 ຄະແນນ )

**ຄະນະກຳມະການອອກຫົວບົດ**